ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 0140 /ກປຝ

ນະຄອນຫຼວງວຽງຈັນ, 20 JAN 2012

# ແຈ້ງການແນະນຳ

ເຖິງ: ຂະແໜງປູກຝັງ ແຂວງ ແລະ ນະຄອນຫຼວງທົ່ວປະເທດ

ເລື່ອງ: ມາດຕະການສຸກເສີນຕໍ່ການອອກໃບຢັ້ງຢືນສຸຂານາໄມພືດໃຫ້ແກ່ພືດຜັກສົ່ງໄປສະຫະພາບເອີລົບ

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ ລົງວັນທີ 9/12/2008
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຈຸດສອບຖາມ SPS ສະບັບເລກທີ 1502/ກປ, ລົງວັນທີ 23/3/2011
- ອີງຕາມລາຍງານຂອງຈຸດປະສານງານອົງການປ້ອງກັນພືດ ແຫ່ງຊາດ ລົງວັນທີ 9/1/2012

ກົມປູກຝັງຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໃນວັນທີ 1/12/2011 ດ່ານສະໜາມບິນ (Heathrow) ຂອງປະເທດອັງກິດໄດ້ແຈ້ງລາຍງານມາຍັງຈຸດປະສານອົງການປ້ອງກັນພືດຂອງ ສປປ. ລາວ NPPO (ກົມປູກຝັງ) ກ່ຽວກັບການທຳລາຍ ຜັກບົວລະພາ (Ocibium basilicum) ທີ່ນຳເຂົ້າ ຈາກ ສປປ ລາວ ຍ້ອນການຢັ້ງຢືນ ສຸຂານາໄມພືດ ບໍ່ຖືກຕ້ອງຕາມລະບຽບຂອງ ສະຫະພາບເອີລົບ COUNCIL DIRECTIVE 2000/29/EC ລົງວັນທີ 8/5/2000 ໂດຍມີບົ້ງຊອນຜັກ Liriomyza sp. ເຊິ່ງເປັນສັດຕູພືດຕ້ອງຫ້າມ ຕິດແປດໄປນຳພືດນຳເຂົ້າດັ່ງກ່າວ. ດັ່ງນັ້ນ, ເພື່ອບໍ່ໃຫ້ມີຜົນກະທົບຕໍ່ການສົ່ງອອກພ້ອມທັງສ້າງຄວາມເຊື່ອໝັ້ນໃຫ້ແກ່ຕະຫຼາດນຳເຂົ້າພືດຜັກຕ່າງ ໆ ໂດຍສະເພາະໃນສະກຸນຜັກບົວລະພາ ຈາກ ສປປ. ລາວ ໃນອະນາຄົດ.

ກົມປູກຝັງຈຶ່ງອອກແຈ້ງການມາດຕະການປະຕິບັດສຸກເສີນຄືດັ່ງລຸ່ມນີ້:

1. ໃຫ້ຢຸດຕິການອອກໃບຢັ້ງຢືນສຸຂານາໄມພືດຊົ່ວຄາວໃຫ້ແກ່ພືດຜັກສົ່ງອອກໄປປະເທດໃນກຸ່ມສະຫະພາບເອີລົບ ຄື: Albania, Algeria, Austria, Azerbaijan, Belarus, Belgium, Bosnia and Herzegovina, Bulgaria, Croatia, Cyprus, Czech Republic, Denmark, Estonia, Finland, France, Germany, Greece, Guernsey, Hungary, Ireland, Israel, Italy, Jersey, Jordan, Kazakhstan, Kyrgyzstan, Latvia, Lithuania, Luxemburg, Macedonia, Malta, Moldova, Morocco, Netherlands, Norway, Poland, Portugal, Romania, Russia, Serbia, Slovakia, Slovenia, Spain, Sweden, Switzerland, Tunisia, Turkey, Ukraine, United Kingdom, Uzbekistan

ໄປຈົນກວ່າຈະມີການກວດກາຫາສາເຫດທີ່ມາຂອງບັນຫາ ຕາມມາດຕະຖານ13ຂອງສົນທິສັນຍາປ້ອງກັນພືດສາກົນ ແລະ ແຈ້ງມາດຕະການປັບປຸງ ລະບົບກົນໄກການ ອອກໃບຢັ້ງຢືນສຸຂານາໄມພືດສົ່ງອອກໄປປະເທດໃນກຸ່ມສະຫະພາບເອີລົບ ໂດຍກົມປູກຝັງ.

2. ຖ້າຫາກຜູ້ປະກອບການໃດ ຫຼື ການຈັດຕັ້ງໃດ ຫາກມີຄວາມຈຳເປັນທີ່ຈະສົ່ງອອກພືດຜັກໄປປະເທດໃນກຸ່ມສະຫະພາບເອີລົບ ຕ້ອງແຈ້ງ ແລະ ພົວພັນມາຍັງກົມປູກຝັງ ລ່ວງໜ້າ 2 ອາທິດ ກ່ອນການສົ່ງອອກ ເພື່ອຄົ້ນຄວ້າຫາເງື່ອນໄຂປະຕິບັດດ້ານສຸຂານາໄມພືດໃນແຕ່ລະພືດນຳເຂົ້າຂອງສະຫະພາບເອີລົບ ແລະ ຈັດຕັ້ງເຕັກນິກການກວດກາຢ່າງເຂັ້ມງວດໂດຍສະເພາະຢູ່ແຫຼ່ງຜະລິດພືດເພື່ອອອກໃບຢັ້ງຢືນສຸຂານາໄມພືດ.

3. ມອບໃຫ້ຂະແໜງປູກຝັງລາຍງານລາຍການພືດທີ່ໄດ້ຮັບການອອກໃບຢັ້ງຢືນສຸຂານາໄມພືດຜ່ານມາທີ່ສົ່ງໄປສະຫະພາບເອີລົບ ໃນສົກປີ 2010 - 2011 ເພື່ອເປັນບ່ອນອີງໃຫ້ແກ່ກົມປູກຝັງຄົ້ນຄວ້າຂໍ້ມູນເງື່ອນໄຂປະຕິບັດ ແລະ ສັດຕູພືດຄວບຄຸມສະເພະໃນແຕ່ລະພືດ.

4. ຂະແໜງປູກຝັງທົ່ວປະເທດຕ້ອງເຜີຍແຜ່ຂໍ້ມູນລາຍງານຂອງປະເທດອັງກິດທີ່ທຳລາຍພືດຍ້ອນມີການຕິດແປດສັດຕູພືດຕ້ອງຫ້າມເພື່ອຫຼີກເວັ້ນບໍ່ໃຫ້ມີການສົ່ງພືດອອກໄປໃນຮູບການດັ່ງກ່າວໂດຍອີງໃສ່ເນື້ອໃນແຈ້ງການສະບັບນີ້ໃຫ້ ຜູ້ປະກອບ ການ ແລະ ຂະແໜງການທີ່ກ່ຽວຂ້ອງຊາບ ເພື່ອຫຼີກເວັ້ນຜົນກະທົບທີ່ເກີດຂຶ້ນ.

5. ດ່ານປ້ອງກັນພືດຊາຍແດນທົ່ວປະເທດໂດຍສະເພາະສະໜາມບິນຕ້ອງເພີ່ມທະວີຄວາມເອົາໃຈໃສ່ໃນການສະກັດກັ້ນຊົ່ວຄາວການສົ່ງອອກພືດຜັກໄປປະເທດໃນກຸ່ມສະຫະພາບເອີລົບຕາມເງື່ອນໄຂທີ່ກຳນົດໄວ້ໃນ ຂໍ້ 1 ແລະ ນຳສະເໜີມາດຕະການແກ້ໄຂຕໍ່ຜູ້ສົ່ງອອກ ຕາມ ຂໍ້ທີ 2 ຂອງແຈ້ງການສະບັບນີ້.

6. ມອບໃຫ້ຂະແໜງປູກຝັງ ແລະ ດ່ານປ້ອງພືດ ເອົາໃຈໃສ່ໃນການ ຈັດຕັ້ງປະຕິບັດການຢັ້ງຢືນສຸຂານາໄມພືດ ໃຫ້ສອດຄ່ອງຕາມ ຄຳສັ່ງຂອງ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2136/ກປ ລົງວັນທີ 26/10/2011 ກ່ຽວກັບ ການເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແລະ ກວດກາສຸຂານາໄມພືດທີ່ຈະສົ່ງອອກ, ໃຫ້ສອດຄ່ອງ ກັບລະບຽບການດ້ານສຸຂານາໄມພືດ ຂອງປະເທດປາຍທາງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືຕາມທາງຄວນດ້ວຍ.

ຫົວໜ້າກົມປູກຝັງ

ກົມປູກຝັງ

ດຣ. ມົນທາທິບ ຈັນເພັງໄຊ

ບ່ອນສົ່ງ:

ລັດຖະມົນຕີວ່າການກະຊວງ ກປ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)

ລັດຖະມົນຕີຊ່ວຍວ່າການຜູ້ຊີ້ນຳວຽກງານ SPS 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)

ຫ້ອງການກະຊວງ ກປ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)

ກົມແຜນການ (ຈຸດສອບຖາມ SPS) 1 ສະບັບ (ເພື່ອຊາບ)

ກົມກວດກາ 1 ສະບັບ (ເພື່ອຊາບ )

ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນທົ່ວປະເທດ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)

ກົມນະໂຍບາຍການຄ້າຕ່າງປະເທດ (ຈຸດແຈ້ງ SPS) ກະຊວງ ອກຄ. 1 ສະບັບ (ເພື່ອຊາບ ແລະ ໃຊ້ຕາງລາຍງານ)

ດ່ານປ້ອງກັນພືດ, ບ່ອນລະ 1ສະບັບ (ເພື່ອຈັດຕັ້ງປະຕິບັດ)

ເກັບມ້ຽນ 1 ສະບັບ